# ຫນັງສືຟີລິບປອຍ

ໃຈຄວາມສຳຄັນ ມີຄວາມມ່ວນໃຈໃນອົງພຣະຄຣິດ ຫລື ຫນັງສືແຫ່ງຄວາມຍິນດີ

ຈຳນວນບົດ ໔ ບົດ

## ວ່າດ້ວຍເມືອງຟີລິບປອຍ

ເມືອງຟີລິບປອຍຕັ້ງຢູ່ທີ່ແຂວງມາເກໂດເນັຍໃນທະວີບຢູໂຣບ ທ່ານໂປໂລໄດ້ປ່າວປະກາດທີ່ເມືອງນີ້ເມື່ອເດີນທາງຄັ້ງທີສອງ ຄືພາຍຫລັງທີ່ເພິ່ນໄດ້ເຫັນນິມິດເປັນຊາວມາເກໂດເນັຍຜູ້ນຶ່ງໄດ້ມາປາກົດໃຫ້ເພິ່ນເຫັນໃນເວລາກາງຄືນ ແລ້ວໄດ້ເຊີນໃຫ້ເພິ່ນໄປຊ່ອຍຊາວມາເກໂດເນັຍ (ກິຈການ ໑໖:໙–໑໕) ໃນໂອກາດນີ້ນາງລີດີພ້ອມດ້ວຍຄອບຄົວ ກັບນາຍຄຸກແລະຄອບຄົວຂອງເຂົາໄດ້ເຂົ້າມາເຊື່ອ ແລ້ວໄດ້ເກີດເປັນໝ່ວຍຄຣິສຕະຈັກໝ່ວຍແຣກໃນທະວີບຢູໂຣບ ຕໍ່ມາພາຍຫລັງທ່ານໂປໂລໄດ້ໄປຢ້ຽມຢາມພວກເຂົາເຫລົ່ານີ້ອີກ (ກິຈການ ໒໐:໑–໖)

## ວ່າດ້ວຍເວລາແລະສະຖານທີ່ຂຽນ

ໃນໜັງສືຂອງທ່ານໂປໂລເອງໄດ້ບອກວ່າ ເພິ່ນຖືກຂັງຢູ່ໃນຄຸກທີ່ກຸງໂຣມ (໑:໗,໑໓) ແລະເພິ່ນຄິດວ່າເມື່ອໃດທີ່ເຂົາປ່ອຍອອກໄປ ກໍຈະໄປຢ້ຽມຢາມພວກພີ່ນ້ອງໂລດ (໒:໒໔,໑:໒໕) ສະນັ້ນພວກເຮົາຈຶ່ງເຂົ້າໃຈວ່າ ໜັງສືນີ້ເພິ່ນຂຽນທີ່ກຸງໂຣມ ເມື່ອປີ ຄ.ສ. ໖໓

## ວ່າດ້ວຍຄວາມມຸ່ງໝາຍ

໑. ຄຣິສຕະຈັກໃນເມືອງຟີລິບປອຍໄດ້ໃຊ້ທ່ານເອປາໂຟດິດໄປຫາທ່ານໂປໂລ ເພື່ອມອບເງິນແລະບົວລະບັດເພິ່ນ (໒:໒໕) ແລ້ວທ່ານເອປາໂຟດິດໄດ້ປ່ວຍຢ່າງໜັກ ພວກພີ່ນ້ອງກໍມີຄວາມທຸກໃຈເມື່ອໄດ້ຍິນຂ່າວນີ້ ສະນັ້ນທ່ານໂປໂລຈຶ່ງຕົກລົງໃຈສົ່ງທ່ານເອປາໂຟດິດຄືນໄປຫາພວກພີ່ນ້ອງອີກ. ພ້ອມທັງຂຽນໜັງສືໄປບອກພວກພີ່ນ້ອງກ່ຽວກັບເພື່ອນຂອງເພິ່ນດ້ວຍ ຂໍ ໒:໒໖–໓໐

໒. ເພິ່ນຖືໂອກາດຕອບຄຳຂອບພຣະຄຸນພວກຄຣິສຕະຈັກໃນເມືອງຟີລິບປອຍ ທີ່ໄດ້ມອບໃຫ້ທ່ານເອປາໂຟດິດຖືຂອງຂວັນມາສົ່ງໃຫ້ເພິ່ນ (໔:໑໐–໒໐) ແລະເພິ່ນສົ່ງຂ່າວກ່ຽວກັບເພິ່ນເອງ ພ້ອມທັງເຕືອນສະຕິພວກພີ່ນ້ອງທັງຫລາຍ

## ວ່າດ້ວຍເນື້ອຄວາມ

໑. ໜັງສືຟີລິບປອຍຊ່ອຍໃຫ້ຮູ້ຈັກນິໄສໃຈຄໍ ແລະ ຄວາມປາຖນາຂອງທ່ານໂປໂລໄດ້ດີ ສ່ວນຄຳສັ່ງສອນບໍ່ຄ່ອຍມີປານໃດ ມີແຕ່ຄຳເຕືອນສະຕິແລະເຣື່ອງກ່ຽວກັບຕົວເພິ່ນເອງເທົ່ານັ້ນ

໒. ເຖິງແມ່ນວ່າທ່ານໂປໂລຢູ່ໃນຄຸກ ເພິ່ນກໍຍັງສະແດງຄວາມຍິນດີເພາະເຫັນແກ່ພຣະຄຣິດແລະຍັງຕ້ອງການໃຫ້ພວກພີ່ນ້ອງມີຄວາມຍິນດີເໝືອນກັນນັ້ນດ້ວຍ ຂໍ ໒:໑໗–໑໘,໒໘ ໓:໑; ໔:໔–໗ ຄຳ "ຍິນດີຫລືຊົມຊື່ນຍິນດີ" ໄດ້ມີຢູ່ໃນໜັງສືເຖິງ ໑໒ ເທື່ອ ສະນັ້ນຈຶ່ງເອີ້ນໜັງສືນີ້ວ່າ "ໜັງສືແຫ່ງຄວາມຍິນດີ"

ຄວາມຍິນດີຂອງທ່ານໂປໂລໄດ້ມີ

- ເມື່ອເພິ່ນອ້ອນວອນເຖິງພວກພີ່ນ້ອງ — ບົດ ໑:໔–໕
- ເມື່ອເຫັນຂ່າວປະເສີດໄດ້ແຜ່ໄປ — ບົດ ໑:໑໘
- ເມື່ອເຫັນພວກພີ່ນ້ອງມີຈິດໃຈເປັນນ້ຳໜຶ່ງໃຈດຽວກັນ — ບົດ ໒:໒
- ເມື່ອເພິ່ນຖວາຍຕົວເປັນເຄື່ອງບູຊາຊຶ່ງຈະເປັນປະໂຍດແກ່ຄວາມເຊື່ອຂອງພວກພີ່ນ້ອງ — ບົດ ໒:໑໗
- ມີຄວາມຍິນດີໃນພວກພີ່ນ້ອງເອງ — ບົດ ໔:໑
- ມີຄວາມຍິນດີໃນພຣະເຢຊູຄຣິດ — ບົດ ໓:໑; ໔:໔
- ເມື່ອໄດ້ຮັບຂອງປະທານ — ບົດ ໔:໑໐–໑໙

໓. ໃນບົດ ໒ ຖືເປັນບົດສຳຄັນ ເພາະເປັນພາຣະກິດຂອງພຣະເຢຊູຄຣິດ ແລະທ່ານໂປໂລຢາກໃຫ້ພວກພີ່ນ້ອງຖືເອົາບົດນີ້ ເປັນແບບຢ່າງໃນການຖ່ອມຕົວລົງ ແລະໃຫ້ມີຄວາມນຶກຄິດເປັນອັນໜຶ່ງອັນດຽວກັນ

໔. ທ່ານ ໂປໂລໄດ້ ສະແດງຄວາມປາຖນາ ຂອງ ຕົນ ໃຫ້ ຮູ້ ຈັກ ພຣະຄຣິດ ພ້ອມທັງອຳນາດແລະການຮວມໃຈໃນຄວາມລຳບາກ

ບົດ ໓:໑໐–໑໑

## ວ່າດ້ວຍຫົວຂໍ້ບົດ

ບົດທີ ໑ ວ່າດ້ວຍພຣະຄຣິດເປັນຊີວິດຂອງເຮົາ

ບົດທີ ໒ ວ່າດ້ວຍພຣະຄຣິດເປັນແບບຢ່າງຂອງເຮົາ

ບົດທີ ໓ ວ່າດ້ວຍພຣະຄຣິດເປັນເປົ້າໝາຍຂອງເຮົາ

ບົດທີ ໔ ວ່າດ້ວຍພຣະຄຣິດເປັນຄວາມຍິນດີຂອງເຮົາ

## ການແບ່ງເປັນພາກ

### ພາກທີ ໑ ວ່າດ້ວຍຄວາມຍິນດີໃນຊີວິດຂອງ

ຄົນຄຣິສຕຽນ ບົດ ໑:໑–໒໖

໑. ກ່ຽວກັບອະດີດ ບົດ ໑:໓–໑໑

໒. ກ່ຽວກັບປັຈຸບັນ ບົດ ໑:໑໒–໑໘

໓. ກ່ຽວກັບອານາຄົດ ບົດ ໑:໑໙–໒໖

### ພາກທີ ໒ ວ່າດ້ວຍຄວາມປະພຶດຂອງ

ຄົນຄຣິສຕຽນ ບົດ ໑:໒໗–໒:໓໐

໑. ສິ່ງທີ່ຄວນປາຖນາ ບົດ ໑:໒໗–໒:໑໘

໒. ຜູ້ເປັນແບບຢ່າງທີ່ດີຄື: ໂປໂລ,
ຕີໂມເຕ, ແລະເອປາໂຟດິດ ບົດ ໒:໑໙–໓໐

### ພາກທີ ໓ ຄວາມຕັ້ງໃຈຂອງຄົນຄຣິສຕຽນ ໓:໑–໔:໑

໑. ໃຫ້ຣະວັງພວກສັດຕູ ໓:໑–໓

໒. ໃຫ້ເອົາໃຈຫ່າງອອກຈາກຂອງທີ່ຫ້າມ
ເພື່ອໃຫ້ເຖິງເປົ້າໝາຍຄືການຮູ້ຈັກພຣະເຢຊູ ໓:໔–໑໔

໓. ໃຫ້ຖືເອົາແບບຢ່າງຂອງທ່ານໄປໃລ ໓:໑໕–໔:໑

## ພາກທີ ໔ ວ່າດ້ວຍຄວາມພໍໃຈຂອງຄົນຄຣິສຕຽນ ໔:໒–໒໓

໑. ຄວາມຍິນດີແລະຄວາມສຸກສຳຣານ ໔:໒–໙

໒. ຂອງບຳຣຸງຊີວິດຮ່າງກາຍ ໔:໑໐–໒໐

໓. ການສະແດງຄວາມຄຳນັບ ໔:໒໑–໒໓